ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4870 /ກປ

ນະຄອນຫຼວງວຽງຈັນ, ວັນທີ 03 OCT 2024

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຜັນຂະຫຍາຍ ມະຕິ ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024 ວ່າດ້ວຍການແບ່ງຄວາມ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1860/ຫສນຍ, ລົງວັນທີ 09 ກັນຍາ 2024;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1842/ກຈພ, ລົງວັນທີ 27 ກັນຍາ 2024.

### ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງ ຄະນະຮັບຜິດຊອບຜັນຂະຫຍາຍ ມະຕິ ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024 ວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ດັ່ງມີລາຍຊື່ລຸ່ມນີ້:

I. **ຄະນະຊີ້ນຳລວມ**

| | | |
|---|---|---|
| 1. ທ່ານ ຮສ. ປອ. ລີນຄຳ ດວງສະຫວັນ | ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ | ເປັນຫົວໜ້າ |
| 2. ທ່ານ ທອງພັດ ວົງມະນີ | ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ | ເປັນຮອງ |
| 3. ທ່ານ ກິແກ້ວ ສິງນາວົງ | ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ | ເປັນຄະນະ |
| 4. ທ່ານ ປອ. ນ. ຈັນທະຄອນ ບົວລະພັນ | ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ | ເປັນຄະນະ |

**ຄະນະຊີ້ນຳລວມ ມີໜ້າທີ່:**

- ນຳພາ-ຊີ້ນຳ ຄະນະເນື້ອໃນ ແລະ ກອງເລຂາ ຄົ້ນຄວ້າຜັນຂະຫຍາຍ ມະຕິ ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024 ວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ບົນພື້ນຖານສອດຄ່ອງກັບພາລະບົດບາດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຮັບຜົນດີ;
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານຜັນຂະຫຍາຍ ມະຕິ ດັ່ງກ່າວ ໃຫ້ລັດຖະບານ ຊາບເປັນປະຈຳທຸກເດືອນ.

II. ຄະນະເນື້ອໃນ

| | | | |
|---|---|---|---|
| 1. | ທ່ານ ກິແກ້ວ ສິງນາວົງ | ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ | ເປັນຫົວໜ້າ |
| 2. | ທ່ານ ສີປະໄພ ໄຊສິງຄາມ | ຫົວໜ້າຫ້ອງການ | ເປັນຮອງ |
| 3. | ທ່ານ ບຸນທະວີ ໄຊຍະພັດ | ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ | ເປັນຮອງ |
| 4. | ທ່ານ ປອ. ທັດສະກາ ສະພັງທອງ | ຫົວໜ້າກົມກວດກາ | ເປັນຄະນະ |
| 5. | ທ່ານ ບຸນຈັນ ກົມບຸນຍະສິດ | ຫົວໜ້າກົມປູກຝັງ | ເປັນຄະນະ |
| 6. | ທ່ານ ສົມພອນ ແກ້ວທາວົງ | ຫົວໜ້າກົມສົ່ງເສີມກະສິກຳ ແລະ ສະຫະກອນ | ເປັນຄະນະ |
| 7. | ທ່ານ ປອ. ນິວົງ ສີປະສິດ | ຫົວໜ້າກົມ ຄພດ | ເປັນຄະນະ |
| 8. | ທ່ານ ປອ. ບຸນເດດ ສຸດທະວິໄລ | ຫົວໜ້າກົມແຜນການ ແລະ ການຮ່ວມມື | ເປັນຄະນະ |
| 9. | ທ່ານ ປອ. ຄຳພະຈັນ ວົງຊະນະ | ຫົວໜ້າກົມຊົນລະປະທານ | ເປັນຄະນະ |
| 10. | ທ່ານ ປອ. ກາວີພອນ ພຸດທະວົງ | ຫົວໜ້າກົມລ້ຽງສັດ ແລະ ການປະມົງ | ເປັນຄະນະ |
| 11. | ທ່ານ ຣສ. ປອ. ສົມຫວັງ ພົມມະວົງ | ຫົວໜ້າກົມປ່າໄມ້ | ເປັນຄະນະ |
| 12. | ທ່ານ ຄຳພອນ ມຸນລະໄມ | ຫົວໜ້າກົມກວດກາປ່າໄມ້ | ເປັນຄະນະ |
| 13. | ທ່ານ ບົວທົງ ຄຳຫາ | ຫົວໜ້າກົມພັດທະນາຊົນນະບົດ | ເປັນຄະນະ |
| 14. | ທ່ານ ປອ. ເພັດມະນີແສງ ຊ້າງໄຊຍະສານ | ວ່າການຫົວໜ້າສະຖາບັນ ກປພ | ເປັນຄະນະ |
| 15. | ທ່ານ ຄຳແສນ ອຸ່ນຄຳ | ວ່າການຫົວໜ້າ ສນຕ | ເປັນຄະນະ |
| 16. | ທ່ານ ພັດນະຄອນ ຄົນທະມີໄຊ | ຫົວໜ້າກອງທຶນຫຼຸດຜ່ອນຄວາມທຸກຍາກ | ເປັນຄະນະ |
| 17. | ທ່ານ ດວງຕາວັນ ສີສົມບັດ | ຫົວໜ້າ ສພບ | ເປັນຄະນະ |
| 18. | ທ່ານ ຄຳພູວຽງ ພຸຍສົມບັດ | ຫົວໜ້າ ສສກ | ເປັນຄະນະ |
| 19. | ທ່ານ ປອ. ວົງສະຫວັນ ວົງໄກສອນ | ຫົວໜ້າ ສກພບ | ເປັນຄະນະ |

**ຄະນະເນື້ອໃນ ມີໜ້າທີ່:**

- ຄົ້ນຄວ້າຜັນຂະຫຍາຍ ມະຕິ ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024 ວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ບົນພື້ນຖານສອດຄ່ອງກັບພາລະບົດບາດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຮັບຜົນດີ;
- ຄົ້ນຄວ້າ, ກຳນົດນະໂຍບາຍ ຊຸກຍູ້, ສົ່ງເສີມ, ສ້າງແຜນການ ແລະ ໂຄງການ ດ້ານກະສິກຳ; ກວດກາປະເມີນຄືນການກຳນົດຍຸດທະສາດພັດທະນາ ຂອງບັນດາຂະແໜງການຜະລິດ ແລະ ການບໍລິການ ໂດຍຖືເອົາການກະສິກຳເປັນພື້ນຖານໃຫ້ແກ່ການຂະຫຍາຍອຸດສາຫະກຳ ເພື່ອສຸມໃສ່ຍົກລະດັບຂົງເຂດກະສິກຳທັນສະໄໝ ທີ່ເປັນມິດກັບສິ່ງແວດລ້ອມ ແນໃສ່ສ້າງ ແລະ ຕອບສະໜອງແຫຼ່ງວັດຖຸດິບທີ່ມີຄຸນນະພາບ ແລະ ພຽງພໍຮັບໃຊ້ໃນການປຸງແຕ່ງ;
- ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະຊີ້ນຳລວມ.

III. ກອງເລຂາ

| | | | |
|---|---|---|---|
| 1. | ທ່ານ ປອ. ບຸນເດດ ສຸດທະວິໄລ | ຫົວໜ້າກົມແຜນການ ແລະ ການຮ່ວມມື | ເປັນຫົວໜ້າ |
| 2. | ທ່ານ ປອ. ເພັດແກ້ວ ພູມານີວົງ | ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື | ເປັນຮອງ |
| 3. | ທ່ານ ໂສພາ ສິດທິໂສມ | ຮອງຫົວໜ້າຫ້ອງການ | ເປັນຄະນະ |
| 4. | ທ່ານ ວັນທ່ຽງ ພົມມະສຸລິນ | ຮອງຫົວໜ້າກົມປູກຝັງ | ເປັນຄະນະ |
| 5. | ທ່ານ ປອ. ພັນທະວົງ ວົງສຳພັນ | ຮອງຫົວໜ້າກົມລ້ຽງສັດ ແລະ ການປະມົງ | ເປັນຄະນະ |
| 6. | ທ່ານ ປອ. ສຸນັນທາ ຈຸນລະມະນີ | ຮອງຫົວໜ້າກົມກວດກາປ່າໄມ້ | ເປັນຄະນະ |

7. ທ່ານ ປອ. ພົນໄຊ ອີງໄຊ ຮອງຫົວໜ້າ ກສກສ ເປັນຄະນະ
8. ທ່ານ ທອງເລີຍ ແສງອານົງ ຮອງຫົວໜ້າກົມຊົນລະປະທານ ເປັນຄະນະ
9. ທ່ານ ໄພທູນ ພິລາກອນ ຮອງຫົວໜ້າກົມ ຄພດ ເປັນຄະນະ
10. ທ່ານ ນ. ຄຳພິລາວັນ ອິນທະສອນ ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
11. ທ່ານ ກົມົງ ແກ້ວປະເສີດ ຫົວໜ້າພະແນກແຜນການ, ກຜຣ ເປັນຄະນະ
12. ທ່ານ ນ. ເສົາກັນຍາ ສີລາເພັດ ຫົວໜ້າພະແນກ ພກ, ກຈພ ເປັນຄະນະ
13. ທ່ານ ສະໜານ ວາດສະໜາ ວ່າການຫົວໜ້າ ພມຊ, ກຈພ ເປັນຄະນະ
14. ທ່ານ ເທບພະລິດ ໄຊຍະວົງ ຮັກສາການຫົວໜ້າພະແນກ ຄສລ, ຫກ ເປັນຄະນະ
15. ທ່ານ ວິໄລສັກ ຫຼວງຄຳຊາວ ຮອງຫົວໜ້າພະແນກ ພກ, ກຈພ ເປັນຄະນະ
16. ທ່ານ ກົມພອນ ຂະທຸມພົມ ຮອງຫົວໜ້າພະແນກແຜນການ, ກຜຣ ເປັນຄະນະ

ກອງເລຂາ ມີໜ້າທີ່:

- ຊ່ວຍຄະນະຊີ້ນຳລວມ ແລະ ຄະນະເນື້ອໃນ ຄົ້ນຄວ້າຜັນຂະຫຍາຍ ມະຕິ ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024 ວ່າດ້ວຍການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ບົນພື້ນຖານສອດຄ່ອງກັບພາລະບົດບາດ ຂອງກະຊວງກະສິກຳ ແລະ ປ່າໄມ້;
- ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄົ້ນຄວ້າ, ກຳນົດນະໂຍບາຍ ຊຸກຍູ້, ສົ່ງເສີມ, ສ້າງແຜນການ ແລະ ໂຄງການ ດ້ານກະສິກຳ, ທວດກາປະເມີນຄືນການກຳນົດຍຸດທະສາດພັດທະນາ ຂອງບັນດາຂະແໜງການຜະລິດ ແລະ ການບໍລິການ ໂດຍຖືເອົາການກະສິກຳເປັນພື້ນຖານໃຫ້ແກ່ການຂະຫຍາຍອຸດສາຫະກຳ ເພື່ອສຸມໃສ່ຍົກລະດັບຊີງເຂດກະສິກຳທັນສະໄໝ ທີ່ເປັນມິດກັບສິ່ງແວດລ້ອມ ແນໃສ່ສ້າງ ແລະ ຕອບສະໜອງແຫຼ່ງວັດຖຸດິບ ທີ່ມີຄຸນນະພາບ ແລະ ພຽງພໍຮັບໃຊ້ໃນການປຸງແຕ່ງ;
- ຈັດກອງປະຊຸມປຶກສາຫາລືວຽກງານຕ່າງໆ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ລະບຸໃນ ມະຕິ ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024 ໃຫ້ສາມາດດຳເນີນໄປຢ່າງຄ່ອງຕົວ ແລະ ມີຜົນສຳເລັດ;
- ເປັນເສນາທິການລາຍງານຄວາມຄືບໜ້າການເຄື່ອນໄຫວວຽກງານດັ່ງກ່າວ ໃຫ້ລັດຖະມົນ ແລະ ການນຳກະຊວງ ຊາບ ເປັນປົກກະຕິ;
- ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະຊີ້ນຳລວມ ແລະ ຄະນະເນື້ອໃນ.

ມາດຕາ 2 ມອບໃຫ້ ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ຕາມມາດຕາ 1 ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ວຽກງານດັ່ງກ່າວ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ ພ້ອມທັງລາຍງານຄວາມຄືບໜ້າ ໃຫ້ລັດຖະມົນ ແລະ ການນຳກະຊວງກະສິກຳ ແລະ ປ່າໄມ້ ຊາບ ເປັນປະຈຳທຸກເດືອນ.

ມາດຕາ 3 ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຮທ. ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ກິແກ້ວ ສິງນາວົງ

ບ່ອນນຳສົ່ງ:

1. ທ່ານ ລັດຖະມົນຕີ ແລະ ຮອງລັດຖະມົນຕີ 04 ສະບັບ;
2. ຫ້ອງການ 01 ສະບັບ;
3. ບັນດາກົມທີ່ກ່ຽວຂ້ອງ 18 ສະບັບ;
4. ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ 37 ສະບັບ;
5. ເກັບຮັກສາໄວ້ 02 ສະບັບ.